ກຳລັງທັບເສລີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www. Laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສລີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສລີປະຊາທິປະໄຕລາວ.**

**ສັບບທີ ໔໐໑ ປພຖຊ/ ໑໐໑໗໐໗**

# ບົດຄວາມ

## ຢາກປາບການຄ້າມະນຸດ ຕ້ອງປ່ຽນຣັຖບານ

ຢາກປາບການຄ້າມະນຸດໃນລາວ ຕ້ອງປ່ຽນຣັຖບານ, ເພາະການທີ່ມີເດັກນ້ອຍ, ມີຊາຍໜຸ່ມຍິງສາວ ແລະຜູ້ໃຫຍ່ ວັຍກາງຄົນ ຖືກຕົກເປັນເຍື່ອ ຂອງການຄ້າມະນຸດ ຢ່າງຫລວງຫລາຍນັ້ນ,ມັນບໍ່ໄດ້ເກີດມາຈາກຄວາມຕັ້ງໃຈ ຂອງປະຊາຊົນລາວຈັກໜ້ອຍເລີຍ!... ແຕ່ມັນເກີດມາຈາກ ໃຈດຳອຳມະຫິດ, ຂາດຄຸນນະທັມ, ຂາດອະຣິຍະທັມ ໃນການບໍຣິຫານ ປະເທດຊາດ ຂອງພັກຣັດຕ່າງຫາກ. ພວກເຂົາ ຈຶ່ງບໍ່ມີທາງເລືອກ, ຕ້ອງໄດ້ຝືນໃຈ ສ່ຽງຕໍ່ຊາຕາຊີວິດອັນມືດມົນ ແທນທີ່ ຈະອຶດຕາຍ.

ນັບແຕ່ມື້ຂຶ້ນຄອງອຳນາດ ປີ 1975 ເປັນຕົ້ນມາ, ພັກຣັດບໍ່ໄດ້ສົ່ງເສີມປະຊາຊົນລາວ ໂດຍສະເພາະເຍົາວະຊົນ ໃຫ້ໄດ້ຮັບການສຶກສາ ຢ່າງທົ່ວເຖິງກັນ ເພື່ອໃຫ້ພວກເຂົາ ໄດ້ມີຄວາມຮູ້, ຄວາມສາມາດ ໃນການປະກອບອາຊີບທີ່ດີ... ແຕ່ພັກຣັດ ຊ້ຳພັດເລັ່ງສ້າງ ແລະສົ່ງເສີມກົນໄກ ອະບາຍຍະມຸກຂຶ້ນຢ່າງກວ້າງຂວາງໃນທົ່ວປະເທດ ເພື່ອເບື່ອເມົາຊາວໜຸ່ມລາວ ໃຫ້ກາຍເປັນຄົນພິການ ທາງດ້ານຮ່າງກາຍ ແລະຈິດໃຈໄປໃນຕົວ.

ປະຈຸບັນ, ສັງຄົມປັ່ນປວນ, ບໍ່ມີຄວາມປອດພັຍ, ນັກທ່ອງທ່ຽວ ເກີດມີຄວາມສະທ້ານຢ້ານກົວ ເມື່ອຂ້າມມາຝັ່ງລາວ, ເພາະສ່ວນຫລວງຫລາຍ ຖືກປຸ້ນຈີ້ ລ່ວງກະເປົາ, ຂ້າເຈົ້າເອົາຂອງ ບໍ່ເວັ້ນແຕ່ລະວັນ ຊຶ່ງນັກຂ່າວ ບໍ່ມີສິດທິ ຈະເປີດເຜີຍຄວາມຈິງນີ້ໄດ້.

ກຸ່ມນາຍໜ້າຄ້າມະນຸດຢູ່ລາວ ລ້ວນແລ້ວແຕ່ແມ່ນລູກເມັຽ, ຍາດພີ່ນ້ອງ ແລະພັກພວກ ຜູ້ມີອິດທິພົນຢູ່ໃນວົງການຣັຖບານ ເປັນຜູ້ຈັດສົ່ງ ໃຫ້ສາຂາຕ່າງໆໃນທົ່ວປະເທດໄທຍ ເພື່ອຂາຍຕໍ່.

ໃນຊ່ວງ 2 ປີມານີ້, ເຈົ້າໜ້າທີ່ໄທຍ ໄດ້ສົ່ງຜູ້ເຄາະຮ້າຍ ຕົກເປັນເຍື່ອ ຂອງການຄ້າມະນຸດ ຄືນໃຫ້ລາວແລ້ວ, ມີບໍ່ຕໍ່າກວ່າ 1,000 ຄົນ. ສ່ວນທີ່ຍັງເຫລືອ ຖືກທຸກທໍຣະມານ ຢູ່ໃນແດນ ນາຣົກ ແຫ່ງອື່ນໆ ທີ່ບໍ່ໄດ້ພົບເຫັນ ກໍຍັງມີຫລາຍຢູ່ ເພາະປະຈຸບັນ, ຊາຍໜຸ່ມຍິງສາວ ແລະເດັກ ນ້ອຍ ທີ່ກຸ່ມນາຍໜ້າຄ້າມະນຸດຢູ່ລາວ ຫລອກລວງໄປຂາຍແຮງງານ ໃນປະເທດໄທຍ ມີບໍ່ຕໍ່າກວ່າ 400.000 ຄົນ.

ພັກຣັດ ບໍ່ໄດ້ເອົາໃຈໃສ່ປາບປາມການຄ້າມະນຸດໃນລາວ ໃຫ້ໝົດໄປ ເທົ່າທີ່ຄວນ ຍ້ອນວ່າ ຄົນລາວ ທີ່ຕົກເປັນເຍື່ອ ຂອງການຄ້າມະນຸດນັ້ນ, ແມ່ນຫລຸມຊັພ, ແມ່ນກ້ອນເງິນກ້ອນຄໍາ ທີ່ ສ້າງຄວາມລໍ້າລວຍ ຮັ່ງມີໃຫ້ແກ່ພັກຣັດ ຜູ້ມີອໍານາດ ໄດ້ຢ່າງມະຫາສານ.

ການທີ່ອົງການຈັດຕັ້ງສາກົນ ເຫັນວ່າ ພັກຣັດວຽງຈັນ ໃຫ້ຄວາມຮ່ວມມື ຕ້ານການຄ້າມະນຸດ ນັ້ນ, ມັນເປັນພຽງສາກລະຄອນສາກນຶ່ງເທົ່ານັ້ນ ເພື່ອຫລອກລວງ ຫັນເຫຄວາມຕັ້ງໃຈ ຂອງ ສາ ກົນ ທີ່ຈະບີບຣັດ ແລະກ່າວປະນາມພັກຣັດ ໃຫ້ເວ ໄປທາງອື່ນເທົ່ານັ້ນເອງ.

ພັກຣັດວຽງຈັນ ຂາດຄຸນທັມ, ຂາດອະຣິຍະທັມ ໃນການບໍຣິຫານປະເທດຊາດ. ພັກຣັດບໍ່ໄດ້ ຫ່ວງໃຍນໍາຄວາມທຸກຍາກລໍາບາກ ຂອງປະຊາຊົນ ທີ່ທົນທຸກທໍຣະມານ ຢູ່ພາຍໃຕ້ອະນາດຜະເດັດການ ມາເປັນເວລາດົນນານຈັກໜ່ອຍເລີຍ... ພັກຣັດ ເຫັນແກ່ໄດ້ຢ່າງດຽວ. ຄືວ່າ "ການຄ້າມະນຸດ ມີກໍາໄຣຫລາຍ" ມັນບໍ່ພຽງແຕ່ສ້າງຮັ່ງຄູນມີ ໃຫ້ແກ່ຄນະພັກຣັດເທົ່ານັ້ນ ມັນຍັງເປັນເງື່ອນໄຂອັນດີ ໃນການຍາດແຍ່ງ ຂໍເອົາການຊ່ວຍເຫລືອລ້າ ຈາກອົງການຈັດຕັ້ງສາກົນ ມາເຂົ້າຖົງ ຂອງພວກເຂົາ ໄດ້ຕື່ມອີກ.

ສັ້ນ, ກອງປະຊຸມກ່ຽວກັບການຄ້າມະນຸດ ໃນພາກພື້ນເອເຊັຽປາຊີຟິກ ທີ່ໄດ້ຈັດຂຶ້ນຢູ່ບາງກອກ ແຕ່ວັນທີ 2 ເຖິງ 4 ຕຸລາ 2007 ຜ່ານມານີ້, ມັນຈຶ່ງໄດ້ສ້າງຄວາມຕື່ນເຕັ້ນ, ກະຕືລືລົ້ນ ໃຫ້ ພັກຣັດ ໄດ້ອອກມາຫລິ້ນລະຄອນລວງຕາໂລກອີກຄັ້ງໃໝ່ ຄືໃຫ້ເຈົ້າໜ້າທີ່ ຂອງຣັຖ ອອກມາໃຫ້ ຄວາມເຫັນ ປະເພດ ເລື້ອງຈິງ ອິງນິຍາຍ...ແຕ່ສຸດທ້າຍ, ກໍລົງເອີ່ຍວ່າ "ປາບປາມການຄ້າມະນຸດ ຈະໄດ້ຮັບຜົນນ້ອຍຫລາຍພຽງໃດ ກໍຂຶ້ນກັບງົບປະມານ, ຂຶ້ນກັບຣັຖບານ ໃນການປະຕິບັດງານ". ອັນນີ້ ກໍໝາຍຄວາມວ່າ ຖ້າອົງການຈັດຕັ້ງສາກົນ ບໍ່ໃຫ້ການຊ່ວຍເຫລືອ ຫລື ໃຫ້ການຊ່ວຍເຫລືອ ແຕ່ຫາກພັກຣັດ ເອົາໄປເຂົ້າຖົງຕົນເອງໝົດ. ບັນຫາການຄ້າມະນຸດ ກໍຈະບໍ່ຖືກນໍາມາແກ້ໄຂໃຫ້ດີ ຂຶ້ນໄດ້.

ພວກເຮົາ ປະຊາຊົນພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ ຮຽກຮ້ອງມາຍັງອົງການຈັດຕັ້ງ ສາກົນ ຢ່າໄດ້ຫລົງເຊື່ອ ກົນອຸບາຍຫລອກລວງຂອງພັກຣັດວຽງຈັນ ທີ່ອ້າງເອົາກົດໝາຍອາຍາ ມາ ຕຣາ 75, ມາຕຣາ 100, ມາຕຣາ 134 ກ່ຽວກັບການຄ້າມະນຸດ ແລະຈະຈັດຕັ້ງກຸ່ມໄອຍະການ ສານ ເພື່ອພິຈາຣະນາ ລົງໂທດຜູ້ກະທໍາຜິດນັ້ນ ມາແບບອ້າງ ເປັນສາກບັງໜ້າ ເພື່ອຍາດແຍ່ງເອົາ ການຊ່ວຍເຫລືອ ຈາກອົງການຈັດຕັ້ງສາກົນ ມາເຂົ້າຖົງຂອງພວກເຂົາ.

ພັກຣັດ ໄດ້ປະກາດໃຊ້ກົດໝາຍຣັຖທັມນູນ ໂດຍມີ 3 ອໍານາດ ແຍກອອກຈາກກັນ ຄື : ອໍານາດນິຕິບັນຍັດ, ອໍານາດບໍຣິຫານ, ແລະອໍານາດຕຸລາການ ປະຕິບັດວຽກງານ ຂອງໃຜລາວ ຢ່າງເປັນເອກຣາດ, ແຕ່ຮອດປະຈຸບັນນີ້ ພັກຣັດຍັງເຂົ້າແຊກແຊງ ແລະຄວບຄຸມຮອບດ້ານ, ໃຊ້ອໍານາດຜເດັດການ ຢູ່ເໝືອນເດີມ.

ສນັ້ນ, ພວກເຮົາຈຶ່ງຮຽກຮ້ອງມາຍັງອົງການຈັດຕັ້ງສາກົນ U N O D C. ຈົ່ງໄດ້ຢຸດຕິໃຫ້ການຊ່ວຍເຫລືອລາວອີກຕໍ່ໄປ ໃນທຸກໆກໍຣະນີ ແລະບີບຣັດ ໃຫ້ພັກຣັດວຽງຈັນ ຕ້ອງປ່ຽນຣັຖບານໂດຍໄວ.

**ສູນກາງຕາງໜ້າ**

**ພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໑໗ ຕຸລາ ໒໐໐໗.**